# <u>ບົດຂ່າວ</u>

## ກອງປະຊຸມຜູ້ຖືຮຸ້ນສາມັນ ທຄຕລ ປະຈໍາປີ 2016

## ຄັ້ງວັນທີ 28/04/217

ເລີ້ມແຕ່ເວລາ 14:00 ໂມງ ຂອງວັນ ທີ 28/04/2017 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນຂອງຕົນຂຶ້ນ ທີ່ຊັ້ນ 8 ຕະຫລາດຫລັກຊັບລາວ. ກອງປະຊຸມໄດ້ດໍາເນີນພາຍໃຕ້ການເປັນປະທານຂອງ ທ່ານ ປະທານສະພາບໍລິຫານ ທຄຕລ (ດຣ. ບຸນເຫລືອ ສິນໄຊວໍລະວົງ). ກອງປະຊຸມໄດ້ດໍາເນີນຢ່າງມີບັນຍາກາດຟົດຟື້ນ, ໂດຍສະເພາະການເຂົ້າຮ່ວມຂອງຂາຮຸ້ນໃຫຍ່ ເຊັ່ນກະຊວງການເງິນ ທີ່ຖືຮຸ້ນ 70%, ຕາງໜ້າທະນາຄານຄູ່ຮ່ວມຍຸດທະສາດ (COFI BRED) ທີ່ຖືຮຸ້ນ ທຄຕລ 10%. ນອກນັ້ນ, ຍັງມີຂາຮຸ້ນຍ່ອຍ ເຂົ້າຮ່ວມຈໍານວນຫລາຍ ໂດຍສອດຄ່ອງກັບລະບຽບການດໍາເນີນກອງປະຊຸມ ທີ່ ສຄຄຊ ກໍານົດໃຫ້ ແລະ ທັງສອດຄ່ອງກັບບັນດາ ນິຕິກໍາກ່ຽວຂ້ອງ. ທ່ານ ປະທານກອງປະຊຸມ ໄດ້ເປີດໂອກາດ ໃຫ້ແກ່ນັກລົງທຶນ ແລະ ຂາຮຸ້ນ ຊັກຖາມບັນດາຂໍ້ຂ້ອງໃຈ  ໂດຍສະເພາະແມ່ນ ຜົນການດໍາເນີນງານ ແລະ ກໍໄດ້ຮັບການຊີ້ແຈງ ຈາກຄະນະປະທານກອງປະຊຸມ ຢ່າງຈະແຈ້ງ. ກອງປະຊຸມ ໄດ້ພິຈາລະນາຮັບຮອງເອົາບັນຫາສໍາຄັນ ໆ ຫລາຍບັນຫາ ທີ່ຊີ້ໃຫ້ເຫັນຜົນການດໍາເນີນງານໄລຍະຜ່ານມາ ແລະ ບັນດາເປົ້າໝາຍ ທິທາງໃນອານາຄົດ ເຊັ່ນ :

- ກອງປະຊຸມ ໄດ້ຊີ້ໃຫ້ເຫັນວ່າ ໃນປີ 2016 ທຄຕລ ສາມາດສ້າງກໍາໄລກ່ອນອາກອນໄດ້ 217 ຕື້ກວ່າກີບ ແລະໄດ້ຮັບຮອງການຈ່າຍເງິນປັນຜົນແກ່ຂາຮຸ້ນ ຮຸ້ນລະ 614 ກີບ. ການຈ່າຍເງິນປັນຜົນຈະຖືກຈັດຕັ້ງປະຕິບັດໃຫ້ສໍາເລັດໃນ 5 ວັນລັດຖະການ ຫຼັງຈາກກອງປະຊຸມຄັ້ງນີ້.
- ໄດ້ພິຈາລະນາ ຮັບຮອງ ແຜນການດໍາເນີນງານ, ແຜນທຸລະກິດ ປະຈໍາປີ 2017 ຄື ຍອດຊັບສິນ ເພີ້ມຂຶ້ນ 10%, ຍອດເງິນຝາກເພີ້ມຂຶ້ນ 5%, ຍອດເງິນກູ້ເພີ້ມຂຶ້ນ 6%, ແຜນກໍາໄລກ່ອນອາກອນເພີ້ມຂຶ້ນ 15%. ທຽບໃສ່ການປະຕິບັດໃນປີ 2016.
- ແຜນປະກອບພະນັກງານໃໝ່, ແຜນການຂະຫຍາຍ ຕາໜ່າງບໍລິການ, ແຜນງົບປະມານ,
- ຮັບຮອງເອົາການແບ່ງຈ່າຍເງິນປັນຜົນຂອງ ທຄຕລ 2017 ແລະ ປີຕໍ່ໜ້າ 1 ຄັ້ງ/ປີ.
- ຮັບຮອງເອົາຍຸດທະສາດການພັດ ທະນາທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແຕ່ປີ 2016-2020.
- ພິຈາລະນາ ຮັບຮອງເອົາແຜນ ການຈໍາໜ່າຍຮຸ້ນ ເພີ້ມທຶນ ທຄຕລ 360 ຕື້ກີບ ໃນປີ 2017.
- ຮັບຮອງການ ເພີ້ມອັດຕາສ່ວນຮຸ້ນທີ່ນັກລົງທຶນຕ່າງປະເທດ ໃຫ້ສາມາດຖືຄອງຮຸ້ນ ທຄຕລ ຈາກ 1% ເປັນ 2% ແລະ ຍົກເລີກອັດຕາສ່ວນການຖືຮຸ້ນລວມຂອງຕ່າງປະເທດ 10%. ໝາຍຄວາມວ່າ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ ສາມາດຊື້-ຂາຍ ຮຸ້ນ ທຄຕລ ໄດ້ໃນຂອບເຂດລວມ 20% ຂອງຮຸ້ນທັງໝົດ.


ທຄຕລ
BCEL
ກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2016 ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Annual General Shareholders' Meeting for the year 2016 Banque Pour Le Commerce Exterieur Lao Public
Lao Securities Exchange Building
28th April 2017






ກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2016 ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Annual General Shareholders' Meeting for the year 2016 Banque Pour Le Commerce Exterieur Lao Public
Lao Securities Exchange Building
28th April 2017